ພັກປະຊາຊົນປະຕິວັດລາວ

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ
## ແຂວງສາລະວັນ ຄັ້ງທີ 3 ສະໄໝທີ X

ວັນທີ 30 ທັນວາ 2025

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ ແຂວງສາລະວັນ ຄັ້ງທີ 3 ສະໄໝທີ X.

---

ກອງປະຊຸມຄົບຄະນະບໍລິຫານງານພັກ ແຂວງສາລະວັນ ຄັ້ງທີ 3 ສະໄໝທີ X ໄດ້ດຳເນີນຂຶ້ນໃນວັນທີ 30 ທັນວາ 2025 ທີ່ສະໂມສອນຂອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງ **ສະຫາຍ ປອ ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ** ເຊິ່ງມີບັນດາສະຫາຍໃນຄະນະບໍລິຫານງານພັກແຂວງ, ຮອງເລຂາພັກເມືອງ, ຫົວໜ້າພະແນກການ ເຂົ້າຮ່ວມທັງໝົດ 33 ທ່ານ, ຍິງ 4 ສະຫາຍ.

I. **ກອງປະຊຸມຄັ້ງນີ້ ໄດ້ຕີລາຄາວ່າ: ໃນປີ2025 ຜ່ານມາ** ເປັນປີມ້ວນທ້າຍຂອງການຈັດຕັ້ງປະຕິບັດມະຕິ XI ຂອງສູນກາງພັກ, ມະຕິ IX ຂອງອົງຄະນະພັກແຂວງ ແລະ ເປັນປີດຳເນີນກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ, ອົງຄະນະພັກເມືອງ, ຄະນະພັກຂັ້ນຕ່າງໆ ຕິດພັນກັບການສະເຫຼີມສະຫຼອງສາມວັນປະຫວັດສາດ, ໃນສະພາບການທີ່ແຂວງສາລະວັນ ປະເຊີນກັບບັນຫາ ເງິນກີບອ່ອນຄ່າ, ລາຄາສິນຄ້າແພງ, ໄພພິບັດທຳມະຊາດ, ພະຍາດລະບາດ, ທາງປ່ເພ ປະກົດການຫຍໍ້ທໍ້ຕ່າງໆ ເກີດຂຶ້ນຕໍ່ກັບບັນຫາດັ່ງກ່າວ ພາຍໃຕ້ການນຳພາ-ຊີ້ນຳ ຂອງຄະນະບໍລິຫານງານພັກແຂວງ ສະໄໝທີ IX ແລະ ການເຊື່ອມຕໍ່ຂອງ ສະໄໝທີ X, ຄະນະພັກຂັ້ນຕ່າງໆ ໄດ້ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ແຂງແຮງຂຶ້ນກວ່າເກົ່າ ຈຶ່ງເຮັດໃຫ້ທົ່ວແຂວງ ຍັງມີຄວາມສະຫງົບ - ຄວາມເປັນລະບຽບຮຽບຮ້ອຍດີ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງໃນລະດັບ 6,3%, ສາມາດຈັດເກັບລາຍຮັບເຂົ້າງົບປະມານຂອງລັດ ໄດ້ເກີນແຜນການທີ່ວາງໄວ້. ສຳເລັດການສະເຫຼີມສະຫຼອງ 3 ວັນປະຫວັດສາດ (ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ), ໂຮມພະແນກການ-ຂະແໜງການ ຈຳນວນໜຶ່ງເຂົ້າກັນ ຕາມນະໂຍບາຍຂອງລັດຖະບານ. ພົ້ນເດັ່ນແມ່ນໄດ້ສຳເລັດກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກແຂວງຄັ້ງທີ X ເຊິ່ງເປັນແຂວງທຳອິດໃນທົ່ວປະເທດ. ຕິດພັນກັບການເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງພັກ - ລັດແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.

ແຕ່ໄປຄຽງຄູ່ກັນນັ້ນ, ໃນໄລຍະ 1 ປີຜ່ານມາ ກໍ່ມີບາງຂໍ້ຄົງຄ້າງ ເປັນຕົ້ນ: ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ຍັງບໍ່ທັນແຂງແຮງ, ການພະລິດເປັນສິນຄ້າທົດແທນການນຳເຂົ້າ, ການຕິດຕາມ, ກວດກາຄຸ້ມຄອງລາຄາສິນຄ້າຕາມທ້ອງຕະຫຼາດຍັງເຮັດບໍ່ທັນໄດ້ຫຼາຍ, ການປັບປຸງຄຸນນະພາບການສຶກສາ ຍັງເຮັດບໍ່ທັນໄດ້ດີ. ການຈັດຕັ້ງມະຕິ 04/ກມສພ, ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໄລຍະໃໝ່ ຍັງບໍ່ທັນເປັນຮູບປະທຳເທົ່າທີ່ຄວນ.

II. ກອງປະຊຸມໄດ້ຮັບຮອງເອົາທິດທາງແຜນການ 2026 ແລະ ແຜນວຽກຈຸດສຸມ ໄລຍະ 3 ເດືອນ (1,2,3) ປີ 2026 ດັ່ງນີ້:

1. ທິດທາງ, ແຜນການນຳພາຮອບດ້ານ ປະຈຳປີ 2026

- ຮັບປະກັນໃນການນຳພາ- ຊີ້ນຳວຽກປ້ອງກັນຊາດ ປ້ອງກັນຄວາມສະຫງົບເປັນຂອງທົ່ວປວງຊົນຮອບດ້ານ, ສ້າງເມືອງປ້ອງກັນຊາດ ເຂັ້ມແຂງ, ເມືອງປ້ອງກັນຄວາມສະຫງົບດີ, ສ້າງກຳລັງ ກອງຫລອນ ປກສ ບ້ານ, ປກຊ-ປກສ ຕາແສງ ຕາມທິດລວມຂອງພັກ, ຮັບປະກັນ ຄວາມສະຫງົບ ແລະ ຄວາມປອດໄພ ໃນບັ້ນເລືອກຕັ້ງ ໃຫ້ໄດ້ 100%.

- ນຳພາ- ຊີ້ນຳ ຄະນະກຳມະການປົກຄອງແຂວງ, ຄະນະກຳການປົກຄອງເມືອງ- ພະແນກການອ້ອມຂ້າງແຂວງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແລະ ໃນປີ 2026 ໃຫ້ບັນລຸແຜນການ, ລື່ນແຜນການທີ່ວາງໄວ້ ໂດຍເພາະການຈັດເກັບລາຍຮັບເຂົ້າງົບປະມານ, ຄຸ້ມຄອງລາຍຈ່າຍ ໄປຕາມວິໃນແຜນການ ແລະ ການເງິນ, ຈັດຕັ້ງປະຕິບັດ ດຳລັດ 599/ລບ ໃຫ້ສຳເລັດ, ແກ້ໄຂບັນຫາ ລົດເກື່ອນ ຍູ້ແຮງການປູກການລ້ຽງ ໃຫ້ຫັນໄປທິດຕັ້ງໜ້າຕາມແນວທາງເສດຖະກິດ-ເອກະລາດ ເປັນເຈົ້າຕົນເອງ, ສົ່ງອອກ ໃຫ້ຫລາຍກວ່າການນຳເຂົ້າ ກຳນົດເຂດແຄ້ນ ໃນບັນດາເມືອງໃຈກາງ ແລະ ເມືອງທາງຜ່ານ, ເອົາໃຈໃສ່ ໃນການປັບປຸງພື້ນຖານໂຄງລ່າງ, ເສັ້ນທາງ-ຂົວ, ການປະກອບສ່ວນສັງຄົມໃນການສ້ອມແປງບ້ານ ຕໍ່ບ້ານ, ຊຸກຍູ້ ແລະ ຍາດແຍ່ງການລົງທຶນ, ເອົາໃຈໃສ່ຄຸ້ມຄອງຊັບພະຍາກອນທຳມະຊາດ-ການຂຸດຄົ້ນແຮ່ທາດ. ເອົາໃຈໃສ່ຢ່າງຈິງຈັງ ແລະ ແຂງແຮງ ໃນການດັດສົມໂຮງງານໄມ້, ໂຮງງານຖ່ານ, ຍາດແຍ່ງ ດຶງດູດການລົງທຶນໃນການກໍ່ສ້າງທາງ S3, ຂົວບົວລະພາ ແລະ ຂົວນ້ຳຂອງແຫ່ງທີ 6, ປັບປຸງ ການບໍລິການຂອງ2 ດ່ານສາກົນ ໃຫ້ມີຄຸນນະພາບໃໝ່.

- ເອົາໃຈໃສ່ ຢ່າງແຂງແຮງ ໃນການຈັດຕັ້ງປະຕິບັດ ບາງຕົວຊີ້ວັດ ໃນຂົງເຂດ ສຶກສາ, ສາທາ ທີ່ຍັງບໍ່ທັນບັນລຸ. ແກ້ໄຂບັນຫາຂາດຄູ, ປະລະການຮຽນ, ການສະໜອງທຶນ, ກອງທຶນຢາ, ການບໍລິການ ປິ່ນປົວຄົນເຈັບ ໃນບັນດາໂຮງໝໍແຫ່ງຕ່າງໆຂອງພາກລັດ ແລະ ເອກະຊົນ, ເອົາໃຈໃສ່ໃນການປັບປຸງແຫລ່ງທ່ອງທ່ຽວ, ການຈັດທຫດສະການຕ່າງໆ, ກວດກາ ແລະ ຄຸ້ມຄອງແຮງງານ, ການສ້າງສີມືແຮງງານ, ຝຶກອົບຮົມ ວິຊາຊີບໃຫ້ຫລາຍຂຶ້ນ ຮັບປະກັນໄດ້ບັນຫາການຂາດແຄນແຮງງານ, ຕິດຕາມ ເກັບກຳລະອຽດແຮງງານລາວ ທີ່ໄປອອກແຮງງານຢູ່ຕ່າງປະເທດ, ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຄຸນງາມ ຄວາມດີຕໍ່ປະເທດຊາດ, ຊ່ວຍເຫລືອ ຜູ້ປະສົບໄພພິບັດທຳມະຊາດ ແລະ ອັກຄີໄພຕ່າງໆ, ປຸກລະດົມຂົນຂວາຍ ການບໍລິຈາກເລືອດ ແລະ ການຊ່ວຍເຫລືອ ສັງຄົມໃຫ້ຫລາຍຂື້ນ.

- ເອົາໃຈໃສ່ ໃນການເຜີຍແຜ່ລະບຽບກົດໝາຍ ໂດຍສະເພາະ ກົດຫມາຍທີ່ພົວພັນໂດຍກົງເຖິງການດຳລົງຊີວິດ ການທຳມະຫາກິນຂອງປະຊາຊົນ, ກໍຄືການຢູ່ຮ່ວມກັນ. ຮັບປະກັນ ການໄປໃຊ້ສິດເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນ ແຂວງ ໃຫ້ໄດ້ 4 ຄາດໝາຍ

ເທົ່າກັບ 400%. ຮັບປະກັນເຮັດໜ້າທີ່ ທີ່ເປັນຕົວແທນແຫ່ງສິດພົນປະໂຫຍດຂອງປະຊາຊົນ ສະພາຊຸດທີ V, ແກ້ໄຂ ຄໍາຮ້ອງຟ້ອງການສະເໜີ ຂໍຄວາມເປັນທໍາ ແລະ ບັນຫາອື່ນໆ.

- ຮັບປະກັນ ການສ້າງແຜນ ກໍານົດພະນັກງານນໍາພາຄຸ້ມຄອງຢ່າງຖືກຕ້ອງພາວະວິໄສ, ຍົກສູງການສ້າງພັກ, ສ້າງພະນັກງານ, ສັບຊ້ອນຈັດວາງພະນັກງານຊອກໃຫ້ເຫັນພະນັກງານທີ່ເກັ່ງມີຄວາມຮູ້ຄວາມສາມາດ, ຈໍາກັດພະນັກງານ ທີ່ບໍ່ທັນທ້າວທັນ, ພະນັກງານທີ່ສວຍໃຊ້ ໜ້າທີ່ຕໍາແໜ່ງທຸກຂັ້ນທຸກລະດັບ, ຕ້ານການສໍ້ລາດບັງຫລວງ ໃຫ້ເປັນວຽກສໍາຄັນແຖວໜ້າ ສະເພາະພະນັກງານ ສະມາຊິກພັກ.

- ເພີ່ມທະວີການນໍາພາ-ຊີ້ນໍາວຽກງານການເມືອງ-ແນວຄິດ ຕິດພັນກັບການສຶກສາອົບຮົມດ້ານການເມືອງເຂົ້າໃນການພັນຂະຫຍາຍມະຕິກອງປະຊຸມໃຫຍ່ແຕ່ລະຂັ້ນໂດຍສະເພາະມະຕິ X ຂອງແຂວງ, ມະຕິ XII ຂອງສູນກາງພັກ, ກົດໝາຍລະບຽບການ ແລະ ນິຕິກໍາຕ່າງໆໃຫ້ເຂົ້າເຖິງທຸກກຸ່ມເປົ້າໝາຍ, ສູ້ຊົນຈັດຝຶກອົບຮົມທິດສະດີການເມືອງໄລຍະສັ້ນ ແລະ ຮຽນທິດສະດີຂັ້ນຕົ້ນ, ຂັ້ນກາງໃຫ້ເປັນລະບົບຕໍ່ເນື່ອງ.

- ສຸມໃສ່ ໃຫ້ອົງການແນວລາວສ້າງຊາດ,ສະຫະພັນນັກຮົບ ແລະ ອົງການຈັດຕັ້ງມະຫາຊົນໃນການປະຕິບັດ ພາລະບົດບາດຂອງຕົນ ຢ່າງເຕັມສ່ວນ ແລະ ແຂງແຮງກວ່າເກົ່າ ໂດຍສະເພາະ ປຸກລະດົມ ໃນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ການພັດທະນາເສດຖະກິດສັງຄົມ, ການສ້າງຄວາມເຂັ້ມແຂງ ດ້ານກອງທຶນ ແລະ ການສ້າງຂະບວນການ ອື່ນໆ

- ເອົາໃຈໃສ່ຢ່າງແຂງແຮງ ໃນການຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ ແຕ່ຫົວທີ, ການລົງໃຫ້ມີຈຸດສຸມແກ້ໄຂວຽກ, ສ້າງເມືອງ ເຂັ້ມແຂງ ໃຫ້ ໄດ້ 1-2 ເມືອງ, ເອົາໃຈໃສ່ ການກະກຽມຄວາມພ້ອມຮອບດ້ານໃນການປະກາດສ້າງຕາແສງ ຕາມທ່າແຮງໃນ 8 ຕົວເມືອງທົ່ວແຂວງ ແລະ ປະກາດເປັນຕົວແບບຢູ່ຕາແສງບຶງໄຊເພື່ອໃຫ້ແຕ່ລະເມືອງຖອດຖອນບົດຮຽນ. ສຸມທຶນຮອນ ໃນການແກ້ໄຂຊົນນະບົດເຂດຫ່າງໄກສອກຫລີກ, ຈັດຕັ້ງປະຕິບັດ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃນໄລຍະໃໝ່.

- ສູ້ຊົນຈັດຕັ້ງບັນດາບົດທຶກຕ່າງໆ ທີ່ໄດ້ເຊັນ ກັບ ສສ ຫວຽດນາມ ເປັນຮູບປະທໍາ, ຈັດຕັ້ງເຄື່ອນໄຫວ ຢ້ຽມຢາມບັນດາແຂວງຂອງ ສສ ຫວຽດນາມ ໃຫ້ ໄດ້ ຢ່າງນ້ອຍ 1-4 ແຂວງ.ການພົວພັນ ແຂວງສາລະວັນ ກັບ ຈັງຫວັດ ອຸບົນ ຣາຊະທານີ ໃຫ້ນັບມື້ນັບແໜ້ນແຟ້ນ.

## 2. ວຽກຈຸດສຸມ ໃນ 3 ເດືອນ (1, 2, 3) ປີ 2026.

1. ສືບຕໍ່ຍູ້ແຮງຄະນະພັກແຕ່ລະຂັ້ນໃນການປະກອບສ່ວນໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X, ສະພາປະຊາຊົນແຂວງຊຸດທີ V ໃຫ້ສາມາດຮັບປະກັນໄດ້ 4 ຄາດໝາຍເທົ່າກັບ 400 %.

2. ສຸມໃສ່ແກ້ໄຂບັນຫາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນປະກົດການປຸ້ນຈີ້, ຊິງລັກງັດແງະ, ບັນຫາອຸປະຕິເຫດຕ່າງໆ , ວາງແຜນການສ້າງບ້ານປ້ອງກັນຊາດເຂັ້ມແຂງ,ປ້ອງ

ກັບຄວາມສະຫງົບດີໃນແຕ່ລະຮາກຖານ, ເອົາໃຈໃສ່ໃນການເກັບອາວຸດເສິກ, ການອອກບັດປະຈຳຕົວທັນສະໄໝໃນແຕ່ລະເມືອງ.ພິເສດແມ່ນການປະຕິບັດບັດວາລະແຫ່ງຊາດຢ່າງເສບຕິດ, ການປ້ອງກັນຮັກສາຄວາມສະຫງົບປອດໄພຕາມບໍລິເວນຊາຍແດນ, ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ແລະ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ- ສະພາປະຊາຊົນແຂວງ. ເອົາໃຈໃສ່ຕ້ານ-ປ້ອງກັນບັນຫາອັກຄີໄພ ໄຟໄໝ້ ອື່ນໆ ເພື່ອການຊ່ວຍເຫຼືອບັນເທົາທຸກໃຫ້ວ່ອງໄວ.

3. ຈັດເກັບລາຍຮັບເຂົ້າງົບປະມານງວດທີ 1 ປີ 2026 ໃຫ້ໄດ້ຕາມແຜນ; ດຶງດູດການລົງທຶນຊົ່ວ-ສຳປະທານ ເພື່ອປູກພືດເປັນສິນຄ້າສົ່ງອອກຕ່າງປະເທດໃຫ້ຫຼາຍຂຶ້ນ, ເລັ່ງຈັດຕັ້ງປະຕິບັດ ດຳລັດ 599/ລບ ໃຫ້ສຳເລັດ, ແກ້ໄຂບັນຫາການອອກອະນຸຍາດທີ່ດິນ ທີ່ຕິດພັນກັບປ່າປ້ອງກັນ-ປ່າພະລິດ ແລະ ອັນທີ່ບໍ່ມີຄວາມຊັດເຈນ, ທີ່ເປັນຫາງສຽງສັງຄົມ, ແກ້ໄຂການຄຸ້ມຄອງ, ການເຄື່ອນຍ້າຍ, ການດັດສົມໂຮງງານປຸງແຕ່ງໄມ້ -ໂຮງງານຖ່ານ, ພ້ອມດຽວກັນເອົາໃຈໃສ່ສ້ອມແປງຊົນລະປະທານໃຫ້ທ່ວງທັນກັບການພະລິດລະດູແລ້ງ, ຍູ້ແຮງຂະບວນການປູກການລ້ຽງໃຫ້ຫຼາຍຂຶ້ນ, ປັບປຸງສຸບກະສິກຳຕ່າງໆຂອງແຂວງ.ເລັ່ງໃສ່ປະເມີນຕາມດຳລັດ 348/ນຍ ໃຫ້ສຳເລັດ, ເອົາໃຈໃສ່ຢ່າງແຂງແຮງໃນການສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ (ເສັ້ນທາງ 15 ແຕ່ສາລະວັນ - ນາປົ່ງ, ນາປົ່ງ- ຊາຍແດນເມືອງລະຄອນເພັງ, ພ້ອມດຽວກັນກໍ່ໃຫ້ເອົາໃຈໃສ່ແກ້ເສັ້ນທາງ 15 ແຕ່ສາລະວັນຫາເມືອງສະໝ້ວຍ, ຊອກຜູ້ລົງທຶນກໍ່ສ້າງເສັ້ນທາງ S3 ແລະ ປຸກລະດົມການປະກອບສ່ວນສ້າງ - ສ້ອມແປງເສັ້ນທາງຂອງພໍ່ແມ່ປະຊາຊົນ. ຄຸ້ມຄອງຢ່າງແຂງແຮງ ລາຄາສິນຄ້າ ໃຫ້ຢູ່ໃນເກນປົກກະຕິ.

4. ເອົາໃຈໃສ່ໃນການແກ້ໄຂການປະລະການຮຽນ, ຍົກສູງຄູສອນ, ສອບເສັງພາກຮຽນທີ 1 ໃຫ້ສາມາດສອບເສັງໄດ້ໃນລະດັບດີ, ປະເມີນຄືນການແກ້ໄຂສະພາບຂາດຄູ. ເອົາໃຈໃສ່ສະໜອງຢາປົວພະຍາດປ້ອງກັນພະຍາດລະບາດ ເພື່ອແກ້ໄຂໃຫ້ທັນການ, ສືບຕໍ່ໃນການສ້າງໂຮງໝໍນ້ອຍ, ສຸກສາລາ ແລະ ໂຮງຮຽນໃນການບໍລິການ, ເອົາໃຈໃສ່ບັນດາຕົວຊີ້ວັດບໍ່ບັນລຸ. ສ້າງຫ້ອງການວັດທະນະທຳ, ບ້ານວັດທະນະທຳ, ຄຸ້ມຄອງການຈັດງານເທດສະການບຸນຕ່າງໆ ໃຫ້ໄປຕາມລະບຽບກົດໝາຍ, ເອົາໃຈໃສ່ໂຄສະນາດ້ານການທ່ອງທ່ຽວ ທີ່ຕິດພັນກັບຜູ້ປະກອບການ, ຍົກລະດັບມໍລະດົກລະດັບແຂວງເປັນມໍລະດົກລະດັບຊາດ. ເອົາໃຈໃສ່ໃນການເກັບກຳສະຖິຕິແຮງງານ, ການເຄື່ອນຍ້າຍແຮງງານ, ການຝຶກອົບຮົມ ແລະ ການຈັດສົ່ງແຮງງານໄປຕ່າງປະເທດ, ເອົາໃຈໃສ່ຕໍ່ຜູ້ມີຜົນງານຄວາມດີຕໍ່ປະເທດຊາດ, ເອົາໃຈໃສ່ເກັບກູ້ລະເບີດບໍ່ທັນແຕກໃຫ້ໄປຕາມແຜນການທີ່ວາງໄວ້, ເອົາໃຈໃສ່ໃນການພົວພັນປຸກລະດົມການບໍລິຈາກເລືອດຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກອັກຄີໄພ, ລົມພາຍຸ ແລະ ອື່ນໆ.

5. ປັບປຸງແບບແຜນວິທີເຮັດວຽກ ແບບເປັນໝູ່ຄະນະ, ປະສານງານກັນຢ່າງກົມກຽວ ແລະ ໄປໃນລວງດຽວກັນ; ຊຸກຍູ້ບັນດາພະແນກການ, ຫ້ອງການ ທີ່ມີການໂຮມກັນ ໃຫ້ເອົາໃຈໃສ່ຂຽນພາລະບົດບາດ ຍົກສູງຄວາມຮັບຜິດຊອບດ້ານການເມືອງ - ປັບປຸງແບບແຜນວິທີການເຮັດວຽກໃຫ້ລະອຽດຊັດເຈນ. ເອົາໃຈໃສ່ເຜີຍແຜ່ລະບຽບກົດໝາຍ, ສ້າງນິຕິກຳໃຕ້ກົດໝາຍ

(2026-2030) ເພື່ອນຳສະເໜີສະພາປະຊາຊົນຮັບຮອງ. ສືບຕໍ່ເອົາໃຈໃສ່ເປີດຫ້ອງການປະຕູດຽວ ໃຫ້ໄດ້ 2 ເມືອງ (ລະຄອນເພັງ ແລະ ເມືອງວາປີ) ເພື່ອໃຫ້ການບໍລິການດີຂຶ້ນ. ຄົ້ນຄວ້າວຽກງານຕາແສງໃຫ້ລະອຽດຂຶ້ນກວ່າເກົ່າ ໂດຍສະເພາະການຂຽນບົດວິພາກ, ການກຳນົດບຸກຄະລາກອນ, ສະຖານທີ່, ພາລະບົດບາດ ໃຫ້ລະອຽດຊັດເຈນ ແລະ ປະຕິບັດການສອງແສງລາຍງານ ໂດຍສະເພາະລະບອບປະຊຸມປະຈຳເດືອນ ເປັນປົກກະຕິ.

6. ຮັບປະກັນ ການສ້າງແຜນ ກຳນົດພະນັກງານນຳພາຄຸ້ມຄອງຢ່າງຖືກຕ້ອງພາວະວິໃສ, ຍົກສູງການສ້າງພັກ, ສ້າງພະນັກງານ, ສັບຊ້ອນຈັດວາງພະນັກງານຊອກໃຫ້ເຫັນພະນັກງານທີ່ເກັ່ງມີຄວາມຮູ້ຄວາມສາມາດ, ຈຳກັດພະນັກງານ ທີ່ບໍ່ຫ້າວຫັນ, ພະນັກງານທີ່ສວຍໃຊ້ ໜ້າທີ່ຕຳແໜ່ງທຸກຂັ້ນທຸກລະດັບ, ຕ້ານການສໍ້ລາດບັງຫລວງ ໃຫ້ເປັນວຽກສຳຄັນແຖວໜ້າ ສະເພາະພະນັກງານ ສະມາຊິກພັກ; ເພີ່ມທະວີການນຳພາ-ຊີ້ນຳວຽກງານການເມືອງ-ແນວຄິດ ຕິດພັນກັບການສຶກສາອົບຮົມດ້ານການເມືອງເຂົ້າໃນການພັນລະຫຍາຍມະຕິກອງປະຊຸມໃຫຍ່ແຕ່ລະຂັ້ນ ໂດຍສະເພາະມະຕິ X ຂອງແຂວງ, ມະຕິ XII ຂອງສູນກາງພັກ, ກົດໝາຍລະບຽບການ ແລະ ນິຕິກຳຕ່າງໆ ໃຫ້ເຂົ້າເຖິງທຸກກຸ່ມເປົ້າໝາຍ, ສູ້ຊົນຈັດຝຶກອົບຮົມທິດສະດີການເມືອງໄລຍະສັ້ນ ແລະ ຮຽນທິດສະດີຂັ້ນຕົ້ນ, ຂັ້ນກາງໃຫ້ເປັນລະບົບຕໍ່ເນື່ອງ.

7. ເອົາໃຈໃສ່ປຸກລະດົມທົ່ວສັງຄົມເຂົ້າຮ່ວມຢ່າງມີຄວາມພ້ອມ ແລະ ຮັບປະກັນໃນບັ້ນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X, ສະພາປະຊາຊົນແຂວງຊຸດທີ V, ເອົາໃຈໃສ່ປະສານສົມທົບກັບພາກສ່ວນສາລະໜາຕ່າງໆ ທີ່ເຄື່ອນໄຫວບໍ່ຖືກຕ້ອງລວມທັງບັນຫາທາງສຽງສັງຄົມຕໍ່ກັບການນຳພາພັກ-ລັດ, ຕິດຕາມໂຄງການຊ່ວຍເຫຼືອຂອງສູນກາງທີ່ໄດ້ປະຕິບັດຢູ່ແຂວງ, ຄົ້ນຄວ້າວາງແຜນການເຮັດກິດຈະກຳ ແລະ ງານບຸນປະເພນີຂອງແຂວງ ປະຈຳປີ 2026. ເຕົ້າໂຮມບັນດານັກຮົບເກົ່າ ປະຕິບັດຕາມຂໍ້ແຂ່ງຂັນ 3 ດີ 6 ຮັກສາ, ໃຫ້ເພີ່ມທະວີກວດກາວຽກງານແຕ່ຫົວທີ, ເອົາໃຈໃສ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຕິດຕາມໂຄງການສ້າງຫໍພິພິຕະພັນຫຼັງສົງຄາມ ແລະ ໂຄງການອື່ນໆ. ສຸມໃສ່ການປະກອບສ່ວນປຸກລະດົມເຂົ້າຮ່ວມກິດຈະກຳຕ່າງໆ ແລະ ການສ້າງແຜນການເຄື່ອນໄຫວໃຫ້ສະມາຊິກຂອງຕົນ ເປັນເຈົ້າການສ້າງວຽກເຮັດງານທຳກາຍເປັນມືອາຊີບ. ເຜີຍແຜ່ເຊື່ອມຊຶມພັນລະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນເທິງ ແລະ ຂັ້ນຕົນໃຫ້ກາຍເປັນການກະທຳຕົວຈິງ.

8. ເອົາໃຈໃສ່ກະກຽມຄົ້ນຄວ້າບັນດາບົດບັນທຶກຊ່ວຍຈຳລະຫວ່າງແຂວງສາລະວັນ ເຊັ່ນກັບບັນດາແຂວງຂອງ ສສ ຫວຽດນາມເພື່ອປັບປຸງໃຫ້ສອດຄ່ອງກັບສະພາບການຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່. ເອົາໃຈໃສ່ສົມທົບກັບພາກສ່ວນກ່ຽວຂ້ອງໃນການເກັບກຳສະຖິຕິຄົນຕ່າງປະເທດ, ການຊ່ວຍເຫຼືອ, ການສ້າງແຜນການເຄື່ອນໄຫວຂອງການນຳໄປຢ້ຽມຢາມ ແລະ ເຮັດວຽກຢູ່ບັນດາແຂວງ ສສ ຫວຽດນາມ 1-3 ແຂວງ. ສືບຕໍ່ພົວພັນແລກປ່ຽນກັບຈັງຫວັດອຸບົນລາດຊະທານີ ໃນການຈັດກອງປະຊຸມຊາຍແດນ, ເອົາໃຈໃສ່ຊຸກຍູ້ຍົກລະດັບດ່ານດອນໝາກເກືອເປັນດ່ານປະເພນີ.

III. ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ຄະນະບໍລິຫານງານພັກແຂວງສະໄໝທີ X, ເລຂາພັກເມືອງ, ເລຂາຄະນະພັກຮາກຖານ ແລະ ໜ່ວຍພັກອ້ອມຂ້າງແຂວງ ນໍາໄປຄົ້ນຄວ້າເຊື່ອມຊຶມ ແລະ ຜັນຂະຫຍາຍ ໃຫ້ເປັນແຜນເຄື່ອນໄຫວ ແລະ ແຜນປະຕິບັດງານ, ໂຄງການ ແລະ ກິດຈະກໍາລະອຽດ ເພື່ອສູ້ຊົນເຮັດສໍາເລັດຕາມ ຄາດໝາຍ.

2. ຕ້ອງສ້າງແຜນ ແລະ ດໍາເນີນການຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດໂດຍຖືເອົາກອງປະຊຸມຄົບຄະນະບໍລິຫານງານພັກແຂວງທຸກໆ 3 ເດືອນ ເປັນການສະຫຼຸບຕີລາຄາຜົນສໍາເລັດຂອງວຽກງານ, ພ້ອມທັງຊຸກຍູ້ ຕິດຕາມ ກວດກາການຈັດຕັ້ງປະຕິບັດ ໃນແຕ່ລະໄລຍະຢ່າງເປັນປົກກະຕິ, ຕໍ່ເນື່ອງ.

ຕ. ຄະນະບໍລິຫານງານພັກແຂວງ

(ເລຂາ)

ປອ. ດາວວົງ ພອນແກ້ວ